ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 568 /ລບ
ນະຄອນຫຼວງວຽງຈັນ, ວັນທີ 16.09.2021

# ດຳລັດ
# ວ່າດ້ວຍການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຈະລາຈອນທາງບົກ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍທາງຫຼວງ ສະບັບເລກທີ 021/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 518/ຍທຂ, ລົງວັນທີ 30 ສິງຫາ 2021.

ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຈະລາຈອນທາງບົກ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ໃນການປັບໃໝ ແລະ ການປະຕິບັດມາດຕະການຕໍ່ຜູ້ລະເມີດຢ່າງຖືກຕ້ອງ ແລະ ເຂັ້ມງວດ ແນໃສ່ເຮັດໃຫ້ຜູ້ຂັບຂີ່ລົດທຸກປະເພດ ແລະ ຜູ້ນຳໃຊ້ທາງຫຼວງ ມີສະຕິຕື່ນຕົວເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ, ເຮັດໃຫ້ການຈະລາຈອນທາງບົກ ມີຄວາມເປັນລະບຽບຮຽບຮ້ອຍ, ສະດວກ, ໂລ່ງລ່ຽນ, ປອດໄພ ແລະ ເປັນເອກະພາບໃນທົ່ວປະເທດ, ປົກປ້ອງ ຊີວິດ ແລະ ຊັບສິນຂອງ ບຸກຄົນ, ລວມໝູ່, ສາທາລະນະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການປັບໃໝ ແລະ ມາດຕະການອື່ນ

ການປັບໃໝ ແມ່ນມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຈະລາຈອນທາງບົກ ຕາມອັດຕາຄ່າປັບໃໝທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕະການອື່ນ ແມ່ນການນຳໃຊ້ມາດຕະການເພີ່ມ ຈາກມາດຕະການປັບໃໝ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການຈະລາຈອນທາງບົກ ເປັນຕົ້ນ ການສຶກສາອົບຮົມ, ການກັກໃບຂັບຂີ່, ການຖອນໃບຂັບຂີ່.

## ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລົດຈັກ** ໝາຍເຖິງ ຍານພາຫະນະປະເພດ ສອງລໍ້, ສາມລໍ້, ສີ່ລໍ້;

2. **ລົດສາມລໍ້ຕິດເຄື່ອງຈັກ** ໝາຍເຖິງ ຍານພາຫະນະປະເພດ ລົດຕຸກໆ, ຈຳໂບ້;

3. **ລົດໂມເປດ (Moped)** ໝາຍເຖິງ ຍານພາຫະນະປະເພດ ສອງລໍ້, ສາມລໍ້ ທີ່ຕິດເຄື່ອງຈັກຂະໜາດບໍ່ເກີນ 50 ຊີຊີ ຫຼື ຕິດມໍເຕີໄຟຟ້າຄວາມແຮງແຕ່ 0,25-4 ກິໂລວັດ ແລະ ບາງກໍລະນີອາດມີແປ້ນຢັນ ຫຼື ເປດາລຄືລົດຖີບ ຊຶ່ງແລ່ນດ້ວຍຄວາມໄວສູງສຸດບໍ່ເກີນ ຫ້າສິບ ກິໂລແມັດຕໍ່ຊົ່ວໂມງ;

4. **ລົດຂົນສົ່ງຜູ້ໂດຍສານຂະໜາດນ້ອຍ** ໝາຍເຖິງ ລົດຂົນສົ່ງຜູ້ໂດຍສານທີ່ມີບ່ອນນັ່ງສູງສຸດບໍ່ເກີນ 15 ບ່ອນນັ່ງ ລວມທັງຜູ້ຂັບຂີ່;

5. **ລົດຂົນສົ່ງຜູ້ໂດຍສານຂະໜາດກາງ** ໝາຍເຖິງ ລົດຂົນສົ່ງຜູ້ໂດຍສານທີ່ມີບ່ອນນັ່ງ ແຕ່ 16 ຫາ 35 ບ່ອນນັ່ງ ລວມທັງຜູ້ຂັບຂີ່;

6. **ລົດຂົນສົ່ງຜູ້ໂດຍສານຂະໜາດໃຫຍ່** ໝາຍເຖິງ ລົດຂົນສົ່ງຜູ້ໂດຍສານທີ່ມີບ່ອນນັ່ງ ແຕ່ 36 ບ່ອນນັ່ງ ຂຶ້ນໄປ ລວມທັງຜູ້ຂັບຂີ່;

7. **ລົດຂົນສົ່ງສິນຄ້າຂະໜາດນ້ອຍ** ໝາຍເຖິງ ລົດຂົນສົ່ງສິນຄ້າທີ່ມີນ້ຳໜັກບັນທຸກ ລວມທັງນ້ຳໜັກລົດບໍ່ເກີນ 3.500 ກິໂລກຣາມ;

8. **ລົດຂົນສົ່ງສິນຄ້າຂະໜາດກາງ** ໝາຍເຖິງ ລົດຂົນສົ່ງສິນຄ້າທີ່ມີນ້ຳໜັກບັນທຸກ ລວມທັງນ້ຳໜັກລົດ ແຕ່ 3.501 ຫາ 15.000 ກິໂລກຣາມ;

9. **ລົດຂົນສົ່ງສິນຄ້າຂະໜາດໃຫຍ່** ໝາຍເຖິງ ລົດຂົນສົ່ງສິນຄ້າທີ່ມີນ້ຳໜັກບັນທຸກ ລວມທັງນ້ຳໜັກລົດ ແຕ່ 15.001 ຫາ 50.000 ກິໂລກຣາມ.

10. **ເຂດການຈະລາຈອນ** ໝາຍເຖິງ ເຂດການສັນຈອນ ໄປ, ມາ ຂອງຄົນ ແລະ ສັດ ຕາມທາງຫຼວງ.

## ມາດຕາ 4 ຫຼັກການກ່ຽວກັບ ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ

ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບຍຸດທະສາດ ແລະ ແຜນດຳເນີນງານຄວາມປອດໄພທາງຫຼວງ ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ຄວບຄຸມການຈະລາຈອນທາງບົກ ມີປະສິດທິພາບ ແລະ ປະສິດທິຜົນສູງ;

2. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ປອດໄພ, ສະດວກ, ໂລ່ງລ່ຽນ, ມີປະສິດທິຜົນ ພ້ອມທັງມີຄວາມຮັບຜິດຊອບສູງ ລະຫວ່າງເຈົ້າໜ້າທີ່ຄວບຄຸມການຈະລາຈອນ ແລະ ຜູ້ນຳໃຊ້ລົດ, ທາງຫຼວງ;

3. ຮັບປະກັນການປະຕິບັດອັດຕາປັບໃໝເປັນເອກະພາບ, ຖືກຕ້ອງ, ເປັນທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້ ບົນພື້ນຖານການປະສານສົມທົບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຢ່າງໃກ້ຊິດໃນຂອບເຂດທົ່ວປະເທດ.

## ມາດຕາ 5 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບການນຳໃຊ້ທາງຫຼວງ ລວມທັງ ທາງດ່ວນ ຢູ່ ສປປ ລາວ.

# ພາກທີ II
# ການປັບໃໝຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຈະລາຈອນທາງບົກ
## ໝວດທີ 1
## ການປັບໃໝຜູ້ຂັບຂີ່ລົດ ບໍ່ເຖິງກະສຽນອາຍຸ ແລະ ມີທາດເຫຼົ້າໃນຮ່າງກາຍ

### ມາດຕາ 6 ຜູ້ຂັບຂີ່ລົດທີ່ບໍ່ເຖິງກະສຽນອາຍຸ

ຜູ້ທີ່ບໍ່ເຖິງກະສຽນອາຍຸຂັບຂີ່ລົດ ຕາມທາງຫຼວງ ພາຍໃນ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ຈະຖືກປັບໃໝ ດັ່ງນີ້:

1. 20.000 ກີບ ສໍາລັບຜູ້ປົກຄອງເດັກ ທີ່ໃຫ້ເດັກທີ່ມີອາຍຸຕໍ່າກວ່າ ເກົ້າ ປີ ຂັບຂີ່ລົດຖີບ;

2. 30.000 ກີບ ສໍາລັບຜູ້ປົກຄອງເດັກ ທີ່ໃຫ້ເດັກທີ່ມີອາຍຸຕໍ່າກວ່າ ສິບສອງ ປີ ຂີ່ລົດໂມເປດ;

3. 50.000 ກີບ ສໍາລັບຜູ້ປົກຄອງເດັກ ທີ່ໃຫ້ເດັກທີ່ມີອາຍຸຕໍ່າກວ່າ ສິບຫ້າ ປີ ຂັບຂີ່ລົດຈັກ;

4. 80.000 ກີບ ສໍາລັບຜູ້ປົກຄອງເດັກ ທີ່ໃຫ້ເດັກທີ່ມີອາຍຸຕໍ່າກວ່າ ສິບແປດ ປີ ຂັບຂີ່ລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທີ່ແກ່ລໍ້, ຕໍ່ອກງ;

5. 100.000 ກີບ ສໍາລັບຜູ້ປົກຄອງຂອງເດັກ ທີ່ໃຫ້ເດັກທີ່ມີອາຍຸຕໍ່າກວ່າ ສິບແປດ ປີ ຂັບຂີ່ລົດ ເກງ, ກະບະ, ຈີບ ແລະ ຕູ້;

6. 150.000 ກີບ ສໍາລັບຜູ້ທີ່ມີອາຍຸຕໍ່າກວ່າ ຊາວສາມ ປີ ຂັບຂີ່ລົດຂົນສົ່ງຜູ້ໂດຍສານຂະໜາດນ້ອຍ;

7. 300.000 ກີບ ສໍາລັບຜູ້ທີ່ມີອາຍຸຕໍ່າກວ່າ ຊາວຫ້າ ປີ ຂັບຂີ່ລົດຂົນສົ່ງຜູ້ໂດຍສານຂະໜາດກາງ;

8. 350.000 ກີບ ສໍາລັບຜູ້ທີ່ມີອາຍຸຕໍ່າກວ່າ ຊາວແປດ ປີ ຂັບຂີ່ລົດຂົນສົ່ງຜູ້ໂດຍສານຂະໜາດໃຫຍ່;

7. 120.000 ກີບ ສໍາລັບຜູ້ທີ່ມີອາຍຸຕໍ່າກວ່າ ຊາວເອັດ ປີ ຂັບຂີ່ລົດຂົນສົ່ງສິນຄ້າຂະໜາດນ້ອຍ;

8. 150.000 ກີບ ສໍາລັບຜູ້ທີ່ມີອາຍຸຕໍ່າກວ່າ ຊາວຫ້າ ປີ ຂັບຂີ່ລົດຂົນສົ່ງສິນຄ້າຂະໜາດກາງ;

9. 200.000 ກີບ ສໍາລັບຜູ້ທີ່ມີອາຍຸຕໍ່າກວ່າ ຊາວແປດ ປີ ຂັບຂີ່ລົດຂົນສົ່ງສິນຄ້າຂະໜາດໃຫຍ່ ລວມທັງ ລົດຫົວລາກທີ່ແກ່ເຄິ່ງຫາງລາກ, ຫາງລາກ ແລະ ລົດຂົນສົ່ງທົ່ວໄປ ທີ່ແກ່ຫາງລາກ ທີ່ມີນໍ້າໜັກລວມແຕ່ 750 ກິໂລກຣາມ ຂຶ້ນໄປ.

ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ມີສິດກັກລົດທີ່ຜູ້ຂັບຂີ່ລະເມີດ ຕາມທີ່ໄດ້ກໍານົດໄວ້ເທິງນີ້ ຈົນກວ່າເຈົ້າຂອງລົດ ຫຼື ຜູ້ປົກຄອງຂອງຜູ້ລະເມີດນັ້ນ ມາຮັບປະກັນເອົາ ໂດຍມີບົດບັນທຶກກ່ຽວກັບການລະເມີດໄວ້ເປັນຫຼັກຖານ ພ້ອມທັງສຶກສາອົບຮົມຜູ້ຂັບຂີ່ລົດທີ່ບໍ່ເຖິງກະສຽນອາຍຸແລ້ວ ຈຶ່ງສົ່ງລົດດັ່ງກ່າວ.

### ມາດຕາ 7 ຜູ້ຂັບຂີ່ລົດທຸກປະເພດໃນເວລາທີ່ມີທາດເຫຼົ້າໃນຮ່າງກາຍ

ຜູ້ຂັບຂີ່ລົດທຸກປະເພດໃນເວລາທີ່ມີທາດເຫຼົ້າໃນຮ່າງກາຍ ຈະຖືກປັບໃໝຕາມແຕ່ລະກໍລະນີ ດັ່ງນີ້:

1. 150.000 ກີບ ສໍາລັບລົດຈັກ ທີ່ມີປະລິມານທາດເຫຼົ້າເກີນ 0,14 ມີລີກຣາມ ຕໍ່ ລິດ;

2. 300.000 ກີບ ສໍາລັບລົດສ່ວນຕົວ ສີ່ ລໍ້ ທຸກຊະນິດ ທີ່ມີປະລິມານທາດເຫຼົ້າເກີນ 0,24 ມີລີກຣາມ ຕໍ່ ລິດ;

3. 1.500.000 ກີບ ສໍາລັບລົດຂົນສົ່ງຮັບຈ້າງທຸກຊະນິດ ທີ່ມີປະລິມານທາດເຫຼົ້າເກີນ 0 ມີລີກຣາມ ຕໍ່ ລິດ.

## ໝວດທີ 2
## ການປັບໃໝ ຜູ້ຂັບຂີ່ທີ່ລະເມີດລະບຽບການ ທາງດ້ານເອກະສານ ກ່ຽວກັບການຈະລາຈອນທາງບົກ

### ມາດຕາ 8 ການຂັບຂີ່ລົດ ໂດຍບໍ່ມີເອກະສານຄົບຖ້ວນ

ຜູ້ຂັບຂີ່ລົດ ຕ້ອງມີເອກະສານຄົບຖ້ວນ ເຊັ່ນ ໃບຂັບຂີ່ຍານພາຫະນະ, ໃບທະບຽນຍານພາຫະນະ, ໃບຢັ້ງຢືນການກວດກາເຕັກນິກ, ໃບເສຍຄ່າທຳນຽມທາງ, ໃບປະກັນໄພຍານພາຫະນະ.

ນອກຈາກເອກະສານທີ່ກ່າວມາຂ້າງເທິງນີ້ ລົດຂົນສົ່ງຜູ້ໂດຍສານ ແລະ ສິນຄ້າ ຍັງຕ້ອງມີ ໃບອະນຸຍາດດຳເນີນທຸລະກິດຂົນສົ່ງ, ໃບອະນຸຍາດແລ່ນລົດ, ປຶ້ມຕິດຕາມການແລ່ນລົດ, ໃບຕິດຕາມຜູ້ໂດຍສານ ແລະ ສິນຄ້າ. ສຳລັບລົດຂົນສົ່ງນັກທ່ອງທ່ຽວ ຕ້ອງມີບັນຊີນັກທ່ອງທ່ຽວ ແລະ ແຜນການນຳທ່ຽວ.

ໃນກໍລະນີຜູ້ຂັບຂີ່ໃດ ຫາກບໍ່ມີເອກະສານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ເທິງນີ້ ຈະຖືກປັບໃໝ ຕາມແຕ່ລະເອກະສານ ແລະ ປະເພດລົດ ດັ່ງນີ້:

1. 30.000 ກີບ ສຳລັບລົດຈັກ;
2. 35.000 ກີບ ສຳລັບລົດສາມລໍ້ຕິດເຄື່ອງຈັກ;
3. 60.000 ກີບ ສຳລັບລົດ ເກງ, ກະບະ, ຈີບ ແລະ ຕູ້;
4. 60.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 80.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 200.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

ໃນກໍລະນີຜູ້ຂັບຂີ່ໃດ ຫາກບໍ່ມີໃບທະບຽນຍານພາຫະນະ ໃຫ້ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ກັກລົດໄວ້ ແລ້ວໃຫ້ເຈົ້າຂອງລົດນຳເອົາເອກະສານທີ່ກ່ຽວຂ້ອງທັງໝົດ ມາຢັ້ງຢືນເອົາລົດ, ຖ້າບໍ່ມີເອກະສານ ທີ່ກ່ຽວຂ້ອງມາຢັ້ງຢືນ ໃຫ້ເຈົ້າໜ້າທີ່ດັ່ງກ່າວ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

### ມາດຕາ 9 ເອກະສານລົດ, ໃບຂັບຂີ່ຍານພາຫະນະທີ່ໝົດກຳນົດ ຫຼື ບໍ່ຖືກຕ້ອງຕາມປະເພດລົດ

ໃນກໍລະນີທີ່ ເອກະສານລົດ, ໃບຂັບຂີ່ຍານພາຫະນະ ຫຼື ເອກະສານລົດໝົດກຳນົດເກີນ ສາມ ເດືອນຂຶ້ນໄປ ຫຼື ເອກະສານບໍ່ຖືກຕ້ອງຕາມປະເພດລົດ ຜູ້ຂັບຂີ່ລົດ ຈະຖືກປັບໃໝ ດັ່ງນີ້:

1. 30.000 ກີບ ສຳລັບລົດຈັກ, ລົດສາມລໍ້ຕິດເຄື່ອງຈັກ;
2. 40.000 ກີບ ສຳລັບລົດ ເກງ, ກະບະ, ຈີບ ແລະ ຕູ້;
3. 60.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 80.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 100.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

ໃນກໍລະນີຜູ້ຂັບຂີ່ລົດໃດໜຶ່ງ ຫາກມີການນຳໃຊ້ໃບຂັບຂີ່ຍານພາຫະນະ ຫຼື ເອກະສານລົດ ຂອງຜູ້ອື່ນ ຫຼື ປອມແປງເອກະສານລົດ ຈະຖືກປັບໃໝ 500.000 ກີບ. ນອກຈາກປັບໃໝແລ້ວ ໃຫ້ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ກັກລົດດັ່ງກ່າວ ແລະ ຍຶດເອກະສານທີ່ປອມແປງ ນັ້ນ ພ້ອມທັງປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

### ມາດຕາ 10 ລົດບໍ່ຕິດປ້າຍທະບຽນ, ຕິດປ້າຍທະບຽນບໍ່ຖືກຕ້ອງ ຫຼື ໝົດອາຍຸການນຳໃຊ້

ຜູ້ຂັບຂີ່ລົດ ບໍ່ມີປ້າຍທະບຽນ, ຕິດປ້າຍທະບຽນບໍ່ຖືກຕ້ອງ ຫຼື ໝົດອາຍຸການນຳໃຊ້ ລວມທັງປ້າຍທະບຽນ ປອມ, ແຕກ, ຫັກ, ຂາດ, ຕົວໜັງສື ຫຼື ຕົວເລກບໍ່ແຈ້ງ, ລຶບ, ຕິດປ້າຍທະບຽນບໍ່ຖືກບ່ອນ, ດັດແປງ

ປ້າຍທະບຽນລົດ ເປັນຕົ້ນ ໃສ່ຂອບປ້າຍ, ໃສ່ແກ້ວ ຫຼື ປຣາສຕິກໃສປົກປ້າຍທະບຽນ, ຕິດສະຕິກເກີ ຫຼື ຮູບພາບໃສ່ປ້າຍທະບຽນ ຈະຖືກປັບໃໝ ດັ່ງນີ້:

1. 20.000 ກີບ ສໍາລັບລົດຈັກ;

2. 30.000 ກີບ ສໍາລັບສາມລໍ້ຕິດເຄື່ອງຈັກ;

3. 80.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

4. 80.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 100.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 150.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

ໃນກໍລະນີຜູ້ຂັບຂີ່ລົດຕິດປ້າຍທະບຽນລົດທີ່ເຮັດເອົາເອງ, ປ້າຍເກົ່າຂອງລົດຄັນອື່ນ ຫຼື ປ້າຍທະບຽນທີ່ຖືກລຶບລ້າງແລ້ວ ຈະຖືກປັບໃໝ ຫ້າ ເທົ່າຂອງອັດຕາປັບໃໝທີ່ກໍານົດໄວ້ເທິງນີ້.

ສໍາລັບລົດທີ່ຕິດປ້າຍທະບຽນປອມ ໃຫ້ເຈົ້າໜ້າທີ່ຄວບຄຸມການຈະລາຈອນ ກັກລົດດັ່ງກ່າວໄວ້ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

## ໝວດທີ 3
## ການປັບໃໝຜູ້ລະເມີດລະບຽບການເຕັກນິກຂອງລົດ

### ມາດຕາ 11 ການນໍາໃຊ້ລົດບໍ່ໄດ້ກວດກາເຕັກນິກ ແລະ ການດັດແປງເຕັກນິກລົດ

ລົດທຸກປະເພດ ຕ້ອງໄດ້ຮັບການກວດກາເຕັກນິກ ຕາມລະບຽບການ ຢ່າງເຂັ້ມງວດ ແລະ ຕ້ອງມີສະພາບເຕັກນິກ ທີ່ຮັບປະກັນຄວາມປອດໄພ ໂດຍໄດ້ຮັບການຢັ້ງຢືນຈາກສູນກວດກາເຕັກນິກລົດ ທີ່ໄດ້ຮັບອະນຸຍາດຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ.

ໃນກໍລະນີເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ຫາກກວດພົບລົດທີ່ບໍ່ມີໃບກວດກາເຕັກນິກ ແລະ ບໍ່ມີໃບອະນຸຍາດດັດແປງເຕັກນິກລົດ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ ຜູ້ຂັບຂີ່, ເຈົ້າຂອງ ຫຼື ຜູ້ຄອບຄອງ ລົດດັ່ງກ່າວ ຈະຖືກປັບໃໝ ດັ່ງນີ້:

1. 70.000 ກີບ ສໍາລັບລົດຈັກ;

2. 80.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ;

3. 150.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

4. 170.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 200.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 250.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ຂົນສົ່ງສິນຄ້າ ຂະໜາດໃຫຍ່.

### ມາດຕາ 12 ການນໍາໃຊ້ລົດ ທີ່ມີສະພາບເຕັກນິກ ບໍ່ໄດ້ມາດຕະຖານ

ໃນກໍລະນີເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ຫາກກວດພົບການນໍາໃຊ້ລົດທີ່ດັດແປງສະພາບເຕັກນິກບໍ່ໄດ້ມາດຕະຖານ ທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ເປັນໄພອັນຕະລາຍຕໍ່ການຈະລາຈອນ ຜູ້ຂັບຂີ່, ເຈົ້າຂອງ ຫຼື ຜູ້ຄອບຄອງ ລົດດັ່ງກ່າວ ຈະຖືກປັບໃໝ ດັ່ງນີ້:

1. ລົດຈັກ, ລົດສາມລໍ້ຕິດເຄື່ອງຈັກ:

1.1. 50.000 ກີບ ສໍາລັບກໍລະນີລະບົບ ໄຟແສງສະຫວ່າງ, ໄຟທ້າຍ, ໄຟສັນຍານ ບໍ່ມີ ຫຼື ບໍ່ຮຸ່ງແຈ້ງ, ມີໄຟຕາເບື້ອງດຽວ, ມີແສງຕໍ່າ ຫຼື ສູງໂພດ, ຕິດຕັ້ງໄຟເສີມໂດຍບໍ່ໄດ້ຮັບອະນຸຍາດ;

1.2. 30.000 ກີບ ສໍາລັບກໍລະນີມີ ຄວັນດໍາ, ຄວັນຂາວ ເກີນຄ່າມາດຕະຖານ;

1.3. 40.000 ກີບ ສໍາລັບກໍລະນີ ລະບົບຫ້າມລໍ້ບໍ່ດີ, ບໍ່ມີແວ່ນສ່ອງຂ້າງ ແລະ/ຫຼື ຫຼັງ;

1.4. 60.000 ກີບ ສໍາລັບກໍລະນີມີທໍ່ອາຍເສຍ ທີ່ພາໃຫ້ມີສຽງດັງເກີນມາດຕະຖານ.

2. ລົດສີ່ລໍ້ ຂຶ້ນໄປ ທຸກປະເພດ:

2.1. 200.000 ກີບ ສໍາລັບກໍລະນີລະພົບ ໄຟແສງສະຫວ່າງ, ໄຟທ້າຍ, ໄຟສັນຍານບໍ່ມີ ຫຼື ບໍ່ຮຸ່ງແຈ້ງ, ມີໄຟຕາເບື້ອງດຽວ, ມີແສງຕໍ່າ ຫຼື ສູງໂພດ, ຕິດຕັ້ງໄຟເສີມໂດຍບໍ່ໄດ້ຮັບອະນຸຍາດ;

2.2. 100.000 ກີບ ສໍາລັບກໍລະນີມີ ຄວັນດໍາ, ຄວັນຂາວ ເກີນຄ່າມາດຕະຖານ;

2.3. 120.000 ກີບ ສໍາລັບກໍລະນີ ລະພົບຫ້າມລໍ້ບໍ່ດີ, ບໍ່ມີແວ່ນສ່ອງຂ້າງ ແລະ ຫຼັງ;

2.4. 150.000 ກີບ ສໍາລັບກໍລະນີມີທໍ່ອາຍເສຍ ທີ່ພາໃຫ້ມີສຽງດັງເກີນມາດຕະຖານ.

3. ລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດ ນ້ອຍ, ກາງ, ໃຫຍ່:

3.1. 400.000 ກີບ ສໍາລັບກໍລະນີລະພົບ ໄຟແສງສະຫວ່າງ, ໄຟທ້າຍ, ໄຟສັນຍານ ບໍ່ມີ ຫຼື ບໍ່ຮຸ່ງແຈ້ງ, ມີໄຟຕາເບື້ອງດຽວ, ມີແສງຕໍ່າ ຫຼື ສູງໂພດ, ຕິດຕັ້ງໄຟເສີມໂດຍບໍ່ໄດ້ຮັບອະນຸຍາດ;

3.2. 100.000 ກີບ ສໍາລັບກໍລະນີມີ ຄວັນດໍາ, ຄວັນຂາວ ເກີນຄ່າມາດຕະຖານ;

3.3. 200.000 ກີບ ສໍາລັບກໍລະນີ ລະພົບຫ້າມລໍ້ບໍ່ດີ, ບໍ່ມີແວ່ນສ່ອງຂ້າງ ແລະ ຫຼັງ;

3.4. 400.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ມີການເສີມເພົາ ແລະ ຕໍ່ເຕີມຕົວຖັງ.

ນອກຈາກການປັບໃໝຕາມທີ່ໄດ້ກໍານົດໄວ້ເທິງນີ້ແລ້ວ ໃນກໍລະນີຫາກກວດພົບລົດທີ່ຕິດຕັ້ງເຄື່ອງສຽງທີ່ເປີດສຽງດັງເກີນມາດຕະຖານ ໃນເວລາຂັບຂີ່ຕາມທາງຫຼວງ ຈະຖືກປັບໃໝ 500.000 ກີບ.

**ມາດຕາ 13 ການຂັບຂີ່ລົດຕຳອີກາງ, ລົດໄຖນາເດີນຕາມແກ່ລໍ້, ລົດອີແຕັນ, ລົດຊິ້ງ ທີ່ມີສະພາບເຕັກນິກບໍ່ສົມບູນ**

ລົດຕຳອີກາງ, ລົດໄຖນາເດີນຕາມແກ່ລໍ້, ລົດອີແຕັນ, ລົດຊິ້ງ ທີ່ບໍ່ມີໄຟເບື້ອງທາງ, ບໍ່ມີໄຟສ່ອງທ້າຍລົດ ຫຼື ບໍ່ມີແຜນສະທ້ອນແສງຕິດທ້າຍລົດ ແລະ ລົດໄຖນາທີ່ບໍ່ມີ ໄຟເບື້ອງທາງ ແລະ ໂຄມໄຟເບື້ອງທ້າຍລົດ ທີ່ສັນຈອນໃນຍາມຄ່ໍາມືດ ຕາມທາງຫຼວງ ຈະຖືກປັບໃໝ 80.000 ກີບ.

## ໝວດທີ 4
## ການປັບໃໝຜູ້ລະເມີດການຂັບຂີ່ ແລະ ການຈະລາຈອນ

**ມາດຕາ 14 ການໃຊ້ຄວາມໄວເກີນກໍານົດ**

ຜູ້ຂັບຂີ່ລົດທຸກປະເພດ ທີ່ຂັບຂີ່ດ້ວຍຄວາມໄວເກີນກໍານົດ ຫຼື ເກີນຄວາມໄວຈໍາກັດໃນປ້າຍຈະລາຈອນທີ່ຕິດຕັ້ງໄວ້ ຕາມແຄມທາງຫຼວງ ຈະຖືກປັບໃໝ ດັ່ງນີ້:

1. ຜູ້ຂັບຂີ່ລົດທຸກປະເພດ ທີ່ຂັບຂີ່ໄວເກີນກໍານົດ ແຕ່ບໍ່ຫຼາຍກວ່າ ສິບຫ້າ ກິໂລແມັດຕໍ່ຊົ່ວໂມງ ຈະຖືກຕັກເຕືອນ ແລະ ເຮັດບົດບັນທຶກໄວ້ ແລ້ວຈຶ່ງປ່ອຍໄປ;

2. ຜູ້ຂັບຂີ່ລົດທຸກປະເພດ ທີ່ຂັບຂີ່ໄວເກີນກໍານົດ ແຕ່ ສິບຫົກ ຫາ ສາມສິບ ກິໂລແມັດຕໍ່ຊົ່ວໂມງ ຈະຖືກປັບໃໝ ດັ່ງນີ້:

2.1. 70.000 ກີບ ສໍາລັບລົດຈັກ;

2.2. 100.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

2.3. 150.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

2.4. 200.000 ກີບ ສໍາລັບລົດຂົນສົ່ງຜູ້ໂດຍສານຂະໜາດນ້ອຍ, 250.000 ກີບ ສໍາລັບລົດຂົນສົ່ງຜູ້ໂດຍສານຂະໜາດກາງ, 300.000 ກີບ ສໍາລັບລົດຂົນສົ່ງຜູ້ໂດຍສານຂະໜາດໃຫຍ່;

2.5. 150.000 ກີບ ສໍາລັບລົດຂົນສົ່ງສິນຄ້າຂະໜາດນ້ອຍ, 200.000 ກີບ ສໍາລັບລົດຂົນສົ່ງສິນຄ້າຂະໜາດກາງ, 250.000 ກີບ ສໍາລັບລົດຂົນສົ່ງສິນຄ້າຂະໜາດໃຫຍ່.

3. ຜູ້ຂັບຂີ່ລົດທຸກປະເພດ ທີ່ຂັບຂີ່ໄວເກີນກຳນົດ ແຕ່ ສາມສິບເອັດ ຫາ ຫ້າສິບ ກິໂລແມັດຕໍ່ຊົ່ວໂມງ ຈະຖືກປັບໃໝ ດັ່ງນີ້:

3.1. 100.000 ກີບ ສຳລັບລົດຈັກ;

3.2. 120.000 ກີບ ສຳລັບຜູ້ຂັບຂີ່ ລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

3.3. 180.000 ກີບ ສຳລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

3.4. 220.000 ກີບ ສຳລັບລົດຂົນສົ່ງຜູ້ໂດຍສານຂະໜາດນ້ອຍ, 280.000 ກີບ ສຳລັບລົດຂົນສົ່ງຜູ້ໂດຍສານຂະໜາດກາງ, 350.000 ກີບ ສຳລັບລົດຂົນສົ່ງຜູ້ໂດຍສານຂະໜາດໃຫຍ່;

3.5. 180.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດນ້ອຍ, 220.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດກາງ, 280.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດໃຫຍ່.

4. ຜູ້ຂັບຂີ່ລົດທຸກປະເພດ ທີ່ຂັບຂີ່ໄວເກີນກຳນົດ ແຕ່ ຫ້າສິບເອັດ ຫາ ໜຶ່ງຮ້ອຍ ກິໂລແມັດຕໍ່ຊົ່ວໂມງ ຈະຖືກປັບໃໝ ດັ່ງນີ້:

4.1. 120.000 ກີບ ສຳລັບລົດຈັກ;

4.2. 150.000 ກີບ ສຳລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

4.3. 200.000 ກີບ ສຳລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

4.4. 250.000 ກີບ ສຳລັບລົດຂົນສົ່ງຜູ້ໂດຍສານຂະໜາດນ້ອຍ, 300.000 ກີບ ສຳລັບລົດຂົນສົ່ງຜູ້ໂດຍສານຂະໜາດກາງ, 370.000 ກີບ ສຳລັບລົດຂົນສົ່ງຜູ້ໂດຍສານຂະໜາດໃຫຍ່;

4.5. 200.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດນ້ອຍ, 250.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດກາງ, 300.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດໃຫຍ່.

5. ຜູ້ຂັບຂີ່ລົດທຸກປະເພດ ທີ່ຂັບຂີ່ໄວເກີນກຳນົດ ແຕ່ ໜຶ່ງຮ້ອຍເອັດ ກິໂລແມັດຕໍ່ຊົ່ວໂມງ ຂຶ້ນໄປ ຈະຖືກປັບໃໝ ດັ່ງນີ້:

5.1. 150.000 ກີບ ສຳລັບລົດຈັກ;

5.2. 180.000 ກີບ ສຳລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

5.3. 250.000 ກີບ ສຳລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

5.4. 270.000 ກີບ ສຳລັບລົດຂົນສົ່ງຜູ້ໂດຍສານຂະໜາດນ້ອຍ, 320.000 ກີບ ສຳລັບລົດຂົນສົ່ງຜູ້ໂດຍສານຂະໜາດກາງ, 400.000 ກີບ ສຳລັບລົດຂົນສົ່ງຜູ້ໂດຍສານຂະໜາດໃຫຍ່;

5.5. 220.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດນ້ອຍ, 270.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດກາງ, 320.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດໃຫຍ່.

### ມາດຕາ 15 ການຈອດລົດບໍ່ຖືກຕ້ອງຕາມລະບຽບການ ກ່ຽວກັບການຈະລາຈອນທາງບົກ

ຜູ້ຂັບຂີ່ລົດ ທີ່ຈອດລົດຢູ່ບ່ອນຫ້າມຈອດ, ມີປ້າຍ ຫຼື ມີເຄື່ອງໝາຍຫ້າມ, ທາງຄ້ອຍ, ທາງໂຄ້ງ, ຫົວຂົວ, ກາງຂົວ, ຂວາງທາງ, ຕັນທາງ, ຊ້ອນກັນ, ເບື້ອງຊ້າຍທີ່ບໍ່ແມ່ນການສັນຈອນທິດທາງດຽວ, ທາງຄົນຍ່າງ, ບໍ່ຖືກຕ້ອງຕາມລັກສະນະ ຂອງປ້າຍກຳນົດ, ຕິດຂອບດອນກາງທາງ, ຂອບວົງວຽນ, ໃກ້ທາງຄົບ, ທາງແຍກ ໃນຂອບເຂດ ສິບຫ້າ ແມັດ, ບໍ່ແນບຂອບທາງ ຫຼື ຫ່າງຈາກຂອບທາງເກີນ ສາມສິບ ຊັງຕີແມັດ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

1. 50.000 ກີບ ສຳລັບລົດຈັກ;

1. 80.000 ກີບ ສຳລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

2. 150.000 ກີບ ສຳລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

3. 200.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 250.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 300.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

### ມາດຕາ 16 ການຈອດລົດຍາມສຸກເສີນ

ຜູ້ຂັບຂີ່ລົດ ທີ່ມີຄວາມຈໍາເປັນຕ້ອງໄດ້ຈອດລົດກະທັນຫັນຢູ່ເຂດຫ້າມຈອດ ຍ້ອນມີສາເຫດຂັດຂ້ອງທາງດ້ານເຕັກນິກຂອງລົດ, ສຸຂະພາບຂອງຜູ້ຂັບຂີ່ ຫຼື ເພື່ອຈັດເຄື່ອງຂອງ ທີ່ບັນທຸກ ຕ້ອງໃສ່ເຄື່ອງໝາຍເຕືອນອັນຕະລາຍ ທີ່ເປັນປ້າຍສາມຫຼ່ຽມຂອບແດງ, ຈວຍຈະລາຈອນ ຫຼື ເຄື່ອງໝາຍຕ່າງໆທີ່ເປັນສັນຍານເຕືອນໄວ້ ດ້ານໜ້າ ແລະ ຫຼັງ ຫ່າງຈາກລົດຢ່າງໜ້ອຍ ສາມສິບ ແມັດ ພ້ອມທັງເປີດໄຟສັນຍານສຸກເສີນໄວ້.

ຜູ້ລະເມີດ ຈະຖືກປັບໃໝ ດັ່ງນີ້:

1. 50.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

2. 80.000 ກີບ ສໍາລັບລົດ ເກງ, ກະບະ, ຈີບ ແລະ ຕູ້;

3. 100.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 120.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 150.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

### ມາດຕາ 17 ລົດເປ່ເພກາງທາງ

ໃນກໍລະນີທາກມີລົດຕິດຂັດ ຫຼື ເປ່ເພ ຕາມ ທາງຫຼວງ, ຖະໜົນ ຜູ້ຂັບຂີ່ລົດ ຕ້ອງຕິດຕັ້ງເຄື່ອງໝາຍເຕືອນອັນຕະລາຍໄວ້ທາງ ດ້ານຫຼັງ, ໜ້າ ຫ່າງຈາກທ້າຍ, ຫົວລົດ ຢ່າງໜ້ອຍ ສາມສິບ ແມັດ ພ້ອມທັງຍ້າຍລົດດັ່ງກ່າວ ອອກຈາກຊ່ອງຈະລາຈອນ ແລະ ບໍ່ໃຫ້ສ້ອມແປງ ຫຼື ປະລົດໄວ້ກາງທາງຫຼວງ.

ຜູ້ຂັບຂີ່ ຫຼື ເຈົ້າຂອງລົດທີ່ລະເມີດ ຈະຖືກປັບໃໝ ດັ່ງນີ້:

1. 40.000 ກີບ ສໍາລັບລົດຈັກ;

2. 70.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

3. 150.000 ກີບ ສໍາລັບລົດ ເກງ, ກະບະ, ຈີບ ແລະ ຕູ້;

4. 150.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 200.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 250.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

### ມາດຕາ 18 ການຂັບຂີ່ລົດບໍ່ຖືກທິດທາງການຈະລາຈອນ

ຜູ້ຂັບຂີ່ລົດສວນທິດທາງການຈະລາຈອນ ຈະຖືກປັບໃໝ ດັ່ງນີ້:

1. 20.000 ກີບ ສໍາລັບລົດຖີບ, ລົດໂມເປດ;

2. 50.000 ກີບ ສໍາລັບລົດຈັກ;

3. 60.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

4. 150.000 ກີບ ສໍາລັບລົດ ເກງ, ກະບະ, ຈີບ ແລະ ຕູ້;

5. 150.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 170.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 200.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

### ມາດຕາ 19 ການຂັບຂີ່ລົດແຂ່ງກັນ

ຜູ້ຂັບຂີ່ລົດ ນັບແຕ່ສອງຄັນຂຶ້ນໄປ ຫາກໄດ້ຂັບລົດແຂ່ງຂັນກັນ ຢູ່ຕາມທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. 150.000 ກີບ ສຳລັບລົດຖີບ, ລົດໂມເປດ;
2. 200.000 ກີບ ສຳລັບລົດຈັກ;
3. 250.000 ກີບ ສຳລັບລົດສາມລໍ້ຕິດເຄື່ອງຈັກ;
4. 700.000 ກີບ ສຳລັບລົດ ເກງ, ກະບະ, ຈິບ ແລະ ຕູ້;
5. 900.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 950.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 1.000.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

### ມາດຕາ 20 ການຂັບຂີ່ລົດລ່ວງໄຟສັນຍານຈະລາຈອນ, ລະເມີດ ປ້າຍຫ້າມ, ປ້າຍກຳນົດ ຫຼື ປ້າຍບັງຄັບ

ຜູ້ຂັບຂີ່ລົດ ທີ່ລ່ວງໄຟສັນຍານຈະລາຈອນສີແດງ ແລະ ຜູ້ທີ່ສວຍໂອກາດຕໍ່ທ້າຍລົດຄັນອື່ນ ເພື່ອຜ່ານທາງແຍກໄປ ເມື່ອໄຟສັນຍານປ່ຽນເປັນສີເຫຼືອງ ຫຼື ສີແດງແລ້ວ, ລະເມີດ ປ້າຍຫ້າມ, ປ້າຍກຳນົດ ຫຼື ປ້າຍບັງຄັບ ຈະຖືກປັບໃໝ ດັ່ງນີ້:

1. 30.000 ກີບ ສຳລັບລົດຖີບ, ລົດໂມເປດ;
2. 100.000 ກີບ ສຳລັບລົດຈັກ;
3. 120.000 ກີບ ສຳລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;
4. 150.000 ກີບ ສຳລັບລົດ ເກງ, ກະບະ, ຈິບ ແລະ ຕູ້;
5. 300.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 400.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 450.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

### ມາດຕາ 21 ການສັນຍານຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ

ໃນກໍລະນີເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ຕັ້ງຈຸດກວດກາ, ລະບາຍການຈະລາຈອນ ຕາມທາງຫຼວງ ຢູ່ທາງ ຄົບ, ແຍກ ຕ້ອງປະຕິບັດຕາມການຊີ້ບອກຢ່າງເຂັ້ມງວດ.

ຜູ້ລະເມີດ ຈະຖືກປັບໃໝ ດັ່ງນີ້:

1. 30.000 ກີບ ສຳລັບລົດຖີບ, ລົດໂມເປດ;
2. 70.000 ກີບ ສຳລັບລົດຈັກ;
3. 100.000 ກີບ ສຳລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;
4. 120.000 ກີບ ສຳລັບລົດ ເກງ, ກະບະ, ຈິບ ແລະ ຕູ້;
5. 150.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 170.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 200.000 ກີບ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

### ມາດຕາ 22 ການຂັບຂີ່ລົດໂດຍບໍ່ເຄົາລົບສິດຂອງຜູ້ອື່ນ

ຜູ້ຂັບຂີ່ລົດ ທີ່ບໍ່ເຄົາລົບສິດ ຫຼື ບໍ່ຢຸດ ຫຼື ບໍ່ປ່ອຍທາງ ໃຫ້ຜູ້ນຳໃຊ້ທາງຫຼວງ ທີ່ມີບຸລິມະສິດຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ກ່ຽວກັບການຈະລາຈອນທາງບົກ ເປັນຕົ້ນ ເມື່ອອອກຈາກທາງນ້ອຍສູ່ທາງໃຫຍ່ ບໍ່ຢຸດປ່ອຍທາງໃຫ້ລົດທີ່ຢູ່ທາງໃຫຍ່ໄປກ່ອນ, ໃຫ້ລົດທີ່ມາຈາກທາງກ້ຳຂວາ, ທາງວົງວຽນ ທີ່ມີສິດໄປກ່ອນ, ໃຫ້ຄົນຍ່າງ

ຂ້າມທາງໄປກ່ອນ, ລົດທີ່ລ້ຽວຂວາຕາມສັນຍານໄຟລູກສອນລ້ຽວຂວາ ບໍ່ຢຸດໃຫ້ລົດທີ່ໄດ້ຮັບສັນຍານໄຟຂຽວ ໄປກ່ອນ ຈະຖືກປັບໃໝ ດັ່ງນີ້:

1. 20.000 ກີບ ສໍາລັບລົດຖີບ, ລົດໂມເປດ;

2. 50.000 ກີບ ສໍາລັບລົດຈັກ;

3. 70.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

4. 100.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

5. 150.000 ກີບ ສໍາລັບລົດຂົນສົ່ງຜູ້ໂດຍສານຂະໜາດນ້ອຍ, 200.000 ກີບ ສໍາລັບລົດຂົນສົ່ງຜູ້ໂດຍສານຂະໜາດກາງ, 250.000 ກີບ ສໍາລັບລົດຂົນສົ່ງຜູ້ໂດຍສານຂະໜາດໃຫຍ່;

6. 100.000 ກີບ ສໍາລັບລົດຂົນສົ່ງສິນຄ້າຂະໜາດນ້ອຍ,150.000 ກີບ ສໍາລັບລົດຂົນສົ່ງສິນຄ້າຂະໜາດກາງ, 200.000 ກີບ ສໍາລັບລົດຂົນສົ່ງສິນຄ້າຂະໜາດໃຫຍ່.

## ມາດຕາ 23 ການຂັບຂີ່ລົດດ້ວຍຄວາມປະໝາດ

ຜູ້ຂັບຂີ່ລົດ ຖີບ, ຈັກ, ສາມລໍ້ຕິດເຄື່ອງຈັກ ແລະ ຈັກສີ່ລໍ້ ທີ່ບໍ່ຈັບເຂົາລົດໃນເວລາຂັບຂີ່, ຂີ່ຍົກລໍ້ ໜ້າ, ຫຼັງ, ຂີ່ ຮຽງກັນເກີນສອງຄັນຂຶ້ນໄປ, ຊ້ອນກັນເກີນສອງຄົນ, ກັ້ງຄັນຮົ່ມ, ຈ່ອງກັນ, ແກ່ກັນ ຫຼື ຍູ້ກັນໄປ, ໃຊ້ໂທ ລະສັບມືຖື, ຂັບລົດດ້ວຍຄວາມຄຶກຄະນອງ, ເຈີດຊ້າຍເຈີດຂວາ ຈະຖືກປັບໃໝ ດັ່ງນີ້:

1. 30.000 ກີບ ສໍາລັບລົດຖີບ, ລົດໂມເປດ;

2. 80.000ກີບ ສໍາລັບລົດຈັກ;

3. 100.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ.

ຜູ້ຂັບຂີ່ລົດ ທີ່ໃຊ້ໂທລະສັບມືຖື, ເບິ່ງໂທລະພາບ ຫຼື ເບິ່ງຮູບພາບຊີດີ ໃນເວລາຂັບຂີ່ ຫຼື ຂັບຂີ່ລົດດ້ວຍຄວາມຄຶກຄະນອງ, ເຈີດຊ້າຍເຈີດຂວາ ຈະຖືກປັບໃໝ ດັ່ງນີ້:

1. 100.000 ກີບ ສໍາລັບລົດໄຖນາທຸກປະເພດ;

2. 150.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

3. 300.000 ກີບ ສໍາລັບລົດຂົນສົ່ງຜູ້ໂດຍສານຂະໜາດນ້ອຍ, 450.000 ກີບສໍາລັບລົດຂົນສົ່ງຜູ້ໂດຍສານຂະໜາດກາງ, 500.000 ກີບ ສໍາລັບລົດຂົນສົ່ງຜູ້ໂດຍສານຂະໜາດໃຫຍ່;

4. 250.000 ກີບສໍາລັບລົດຂົນສົ່ງສິນຄ້າຂະໜາດນ້ອຍ, 300.000 ກີບສໍາລັບລົດຂົນສົ່ງສິນຄ້າຂະໜາດກາງ, 350.000 ກີບ ສໍາລັບລົດຂົນສົ່ງສິນຄ້າຂະໜາດໃຫຍ່.

## ມາດຕາ 24 ການຂັບຂີ່ລົດຕໍາລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ

ຜູ້ຂັບຂີ່ລົດຕໍາ ດອນກາງທາງ, ວົງວຽນ, ຂອບທາງ, ເສົາໄຟຟ້າ, ເສົາໂທລະສັບ, ທໍ່ນໍ້າປະປາ, ໂຖດອກໄມ້ເອ້ທາງ, ລະບົບສັນຍານການຈະລາຈອນ, ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ, ຖະໜົນ ຈະຖືກປັບໃໝ ດັ່ງນີ້:

1. 70.000 ກີບ ສໍາລັບລົດຈັກ;

2. 100.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

3. 150.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

4. 150.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 250.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 350.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າຂະໜາດໃຫຍ່.

ນອກຈາກຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ເທິງນີ້ແລ້ວ ຜູ້ລະເມີດ ຍັງຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທັງໝົດ ໃນການສ້ອມແປງ ຫຼື ຕິດຕັ້ງຄືນໃໝ່.

**ມາດຕາ 25 ການຢຸດລົດຢຽບ ຫຼື ກາຍເສັ້ນໝາຍຢຸດ ຫຼື ທາງມ້າລາຍ ໂດຍບໍ່ປ່ອຍທາງໃຫ້ຄົນຍ່າງ**

ຜູ້ຂັບຂີ່ລົດທີ່ຢຸດລົດຢຽບ ຫຼື ກາຍເສັ້ນໝາຍຢຸດ ຫຼື ທາງມ້າລາຍໂດຍບໍ່ປ່ອຍທາງໃຫ້ຄົນຍ່າງ ຈະຖືກປັບໃໝ ດັ່ງນີ້:

1. 15.000 ກີບ ສໍາລັບລົດຖີບ, ລົດໂມເປດ;
2. 40.000 ກີບ ສໍາລັບລົດຈັກ;
3. 70.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;
4. 100.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;
5. 100.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 150.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 200.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

**ມາດຕາ 26 ການຂັບຂີ່ລົດບໍ່ຖືກຊ່ອງຈະລາຈອນ ແລະ ບໍ່ແນບຂວາ**

ການຂັບຂີ່ລົດ ຖີບ, ໂມເປດ, ຈັກ, ລໍ້ຍູ້, ສາມລໍ້ຖີບ, ສາມລໍ້ຕິດເຄື່ອງຈັກ, ໄຖນາທຸກປະເພດ ຕ້ອງຂັບຂີ່ຕາມຊ່ອງຈະລາຈອນ, ຕາມຄວາມໄວ ທີ່ກໍານົດໄວ້ ແລະ ບໍ່ໃຫ້ຂັບຂີ່ກວມຊ່ອງຈະລາຈອນ ຫຼື ເສັ້ນແບ່ງທິດທາງການຈະລາຈອນ. ໃນກໍລະນີທີ່ບໍ່ມີຊ່ອງຈະລາຈອນ ໃຫ້ຂັບຂີ່ແນບກໍ້າຂວາມືຂອງຕົນໂດຍຫ່າງຈາກຂອບທາງບໍ່ເກີນ ສອງ ແມັດ.

ຜູ້ຂັບຂີ່ລົດທີ່ລະເມີດ ຈະຖືກປັບໃໝ ດັ່ງນີ້:

1. 20.000 ກີບສໍາລັບລົດຖີບ, ລົດໂມເປດ;
2. 50.000 ກີບ ສໍາລັບລົດຈັກ;
3. 70.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

ໃນກໍລະນີທາງຫຼວງ, ຖະໜົນ ມີ ສອງ ຊ່ອງຈະລາຈອນ ຂຶ້ນໄປ ໃນທິດທາງດຽວກັນ ບໍ່ອະນຸຍາດໃຫ້ຂັບຂີ່ລົດຈັກ, ລົດຂົນສົ່ງ ເຄື່ອງຂອງ, ສິນຄ້າ ຫຼື ຜູ້ໂດຍສານ ລວມທັງລົດສີ່ລໍ້ອື່ນ ທີ່ແລ່ນດ້ວຍຄວາມໄວຕໍ່າແລ່ນຕາມຊ່ອງຈະລາຈອນຊ້າຍສຸດ ຍົກເວັ້ນ ລົດທີ່ຕ້ອງການລ້ຽວຊ້າຍ ຫຼື ລ້ຽວກັບ ໄລຍະ ໜຶ່ງຮ້ອຍຫ້າສິບແມັດ ກ່ອນເຖິງຈຸດລ້ຽວ. ຜູ້ຂັບຂີ່ລົດທີ່ລະເມີດ ຈະຖືກປັບໃໝ ດັ່ງນີ້:

1. 30.000 ກີບ ສໍາລັບລົດຖີບ, ລົດໂມເປດ;
2. 50.000 ກີບ ສໍາລັບລົດຈັກ;
3. 70.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;
4. 100.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;
5. 120.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 150.000ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 200.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

**ມາດຕາ 27 ການນໍາໃຊ້ລະບົບໄຟແສງສະຫວ່າງ ແລະ ໄຟສັນຍານ ທີ່ບໍ່ຖືກຕ້ອງ**

ຜູ້ຂັບຂີ່ລົດ ຕ້ອງນໍາໃຊ້ລະບົບໄຟແສງສະຫວ່າງ ແລະ ໄຟສັນຍານ ໃຫ້ຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການກ່ຽວກັບການຈະລາຈອນທາງບົກ. ໃນກໍລະນີຜູ້ຂັບຂີ່ ນໍາໃຊ້ລະບົບໄຟແສງສະຫວ່າງ ແລະ ໄຟສັນຍານ

ບໍ່ຖືກຕ້ອງ ເປັນຕົ້ນ ການບໍ່ໄດ້ໄຟຕາ ແລະ ໄຟທ້າຍ ໃນຍາມກາງຄືນ, ໃນເວລາທີ່ມີຝົນຕົກໜັກ, ມີນໍ້າໝອກ ລົງໜາໃນຍາມກາງເວັນ ຫຼື ໃນເວລາທີ່ມີອາກາດມືດມົວ, ໃຊ້ໄຟຕາສູງໃນເວລາສວນທາງກັບລົດຄັນອື່ນ.

ຜູ້ລະເມີດ ຈະຖືກປັບໃໝ ດັ່ງນີ້:

1. 20.000 ກີບ ສໍາລັບລົດຖີບ, ລົດໂມເປດ;

2. 50.000 ກີບ ສໍາລັບລົດຈັກ;

3. 70.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

4. 100.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

5. 100.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 150.000 ກີບ ສໍາລັບ ລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 200.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

### ມາດຕາ 28 ການຕິດຕັ້ງໄຟສັນຍານ ແສງ, ສີ ແລະ ສຽງຫວໍ

ບຸກຄົນ, ນິຕິບຸກຄົນ ຫາກຕິດຕັ້ງໄຟສັນຍານ, ແສງ, ສີ ແລະ ສຽງຫວໍ ໃສ່ເທິງຫຼັງຄາລົດ ໂດຍບໍ່ໄດ້ຮັບ ອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

1. 50.000 ກີບ ສໍາລັບລົດຈັກ;

2. 70.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

3. 100.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

4. 120.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 150.000 ກີບ ສໍາລັບ ລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 200.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

ສໍາລັບການເປີດສຽງຫວໍ ທີ່ບໍ່ຖືກຕາມປະເພດລົດທີ່ກໍານົດ ຈະຖືກປັບໃໝ 200.000 ກີບ.

### ມາດຕາ 29 ການຊີງຂຶ້ນໜ້າ, ການຖອຍຫຼັງ ແລະ ການລ້ຽວ ທີ່ບໍ່ຖືກຕ້ອງ

ຜູ້ຂັບຂີ່ລົດ ທີ່ຊີງຂຶ້ນໜ້າລົດຄັນອື່ນ, ຂັບຖອຍຫຼັງ, ລ້ຽວຊ້າຍ, ລ້ຽວຂວາ ຫຼື ລ້ຽວກັບ ໂດຍບໍ່ໃຫ້ສັນຍານ ແກ່ຜູ້ຂັບຂີ່ລົດຄັນອື່ນຮູ້ລ່ວງໜ້າ ເປັນຕົ້ນ ການບໍ່ໃຊ້ໄຟສັນຍານ ຫຼື ການບໍ່ໃຫ້ສັນຍານດ້ວຍການເດ່ແຂນ ໃນໄລຍະ ທີ່ຮັບປະກັນຄວາມປອດໄພແຕ່ ສາມສິບ ແມັດ ຂຶ້ນໄປ ຈະຖືກປັບໃໝ ດັ່ງນີ້:

1. 30.000 ກີບ ສໍາລັບລົດຖີບ, ລົດໂມເປດ;

2. 50.000 ກີບ ສໍາລັບລົດຈັກ;

3. 70.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;

4. 150.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

5. 150.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 170.000 ກີບ ສໍາລັບ ລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 200.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

### ມາດຕາ 30 ການລາກແກ່ລົດ ທີ່ບໍ່ຖືກຕ້ອງ

ຜູ້ຂັບຂີ່ລົດທຸກປະເພດ ທີ່ລາກແກ່ລົດຄັນອື່ນ ຕາມທາງຫຼວງ ຕ້ອງຮັບປະກັນຄວາມປອດໄພ ແລະ ບໍ່ໃຫ້ ກີດຂວາງການສັນຈອນຂອງລົດຄັນອື່ນ. ໃນກໍລະນີຜູ້ຂັບຂີ່ບໍ່ໄດ້ໄຟຕາໜ້າ ທີ່ໃຊ້ລາກແກ່ລົດຄັນອື່ນ, ບໍ່ຕິດປ້າຍ ເຕືອນອັນຕະລາຍ ຫຼື ເຫດສຸກເສີນ ໃສ່ລົດທີ່ຖືກລາກແກ່, ຜູ້ຂັບຂີ່ໃຊ້ລົດລາກແກ່ ບໍ່ຖືກລັກສະນະຕາມທີ່ໄດ້ກໍານົດ

ໄວ້ໃນລະບຽບການກ່ຽວກັບການຈະລາຈອນທາງບົກ ຊຶ່ງມີຄວາມສ່ຽງທີ່ຈະພາໃຫ້ເກີດອຸບປະຕິເຫດ ຈະຖືກປັບໃໝ ດັ່ງນີ້:

1. 30.000 ກີບ ສໍາລັບລົດຖີບ, ລົດໂມເປດ;
2. 50.000 ກີບ ສໍາລັບລົດຈັກ;
3. 70.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;
4. 100.000 ກີບ ສໍາລັບລົດ ເກງ, ກະບະ, ຈິບ ແລະ ຕູ້;
5. 120.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 150.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 200.000 ກີບ ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

### ມາດຕາ 31 ການຂັບຂີ່ລົດຈັກບໍ່ໃສ່ໝວກກັນກະທົບ

ຜູ້ຂັບຂີ່ ລົດຈັກ ແລະ ຜູ້ຊ້ອນທ້າຍ ທີ່ບໍ່ໃສ່ໝວກກັນກະທົບ ຫຼື ໃສ່ໝວກແລ້ວແຕ່ບໍ່ໃສ່ສາຍຮັດຄາງ ຫຼື ໃສ່ສາຍຮັດຄາງບໍ່ແໜ້ນ ຈະຖືກປັບໃໝ 50.000 ກີບຕໍ່ຄົນ.

## ໝວດທີ 5
## ການປັບໃໝຜູ້ລະເມີດກ່ຽວກັບ ການກໍ່ສ້າງ ແລະ ສ້ອມແປງ ສິ່ງປຸກສ້າງ, ການກໍ່ສ້າງຕາມທາງຫຼວງ

### ມາດຕາ 32 ການກໍ່ສ້າງ ແລະ ສ້ອມແປງ ສິ່ງປຸກສ້າງ, ການກໍ່ສ້າງ ຕາມທາງຫຼວງ

ການກໍ່ສ້າງ ຫຼື ສ້ອມແປງຕຶກອາຄານ ຢູ່ໃກ້ບໍລິເວນທາງຫຼວງ ການກໍ່ສ້າງ ແລະ ສ້ອມແປງທາງ, ການຂຸດທາງ ເພື່ອຕິດຕັ້ງ ຫຼື ສ້ອມແປງ ລະບົບໄຟຟ້າ, ນໍ້າປະປາ, ໂທລະຄົມມະນາຄົມ ແລະ ອື່ນໆ, ການຈັດວາງວັດສະດຸກໍ່ສ້າງ ຕ້ອງປະຕິບັດຕາມລະບຽບການຮັກສາຄວາມປອດໄພ ຂອງການຈະລາຈອນ ຢ່າງເຂັ້ມງວດ ໂດຍໃຫ້ຕິດຕັ້ງເຄື່ອງໝາຍເຕືອນອັນຕະລາຍ, ປ້າຍສະທ້ອນແສງ ຫຼື ໃຊ້ດອກໄຟເຍືອງ ໃຫ້ເຫັນແຈ້ງຢ່າງໜ້ອຍ ໜຶ່ງຮ້ອຍແມັດ ຕາມທິດທາງການສັນຈອນ, ພ້ອມກັນນັ້ນ ຕ້ອງຕິດຕັ້ງເຄື່ອງປ້ອງກັນ ຫຼື ລ້ອມຮົ້ວສະຖານທີ່ກໍ່ສ້າງ ຫຼື ສ້ອມແປງ ດັ່ງກ່າວ.

ຜູ້ຮັບຜິດຊອບການກໍ່ສ້າງ ແລະ ສ້ອມແປງ ທີ່ລະເມີດລະບຽບການດັ່ງກ່າວ ຈະຖືກປັບໃໝ 800.000 ກີບ. ໃນກໍລະນີເກີດອຸບປະຕິເຫດ ຜູ້ຮັບຜິດຊອບການກໍ່ສ້າງ ແລະ ສ້ອມແປງ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທັງໝົດ.

### ມາດຕາ 33 ການວາງ ຫຼື ກອງ ວັດສະດຸກໍ່ສ້າງກີດຂວາງການຈະລາຈອນ

ໃນກໍລະນີບຸກຄົນໃດໜຶ່ງ ຫາກມີການ ວາງ ຫຼື ກອງ ວັດສະດຸກໍ່ສ້າງ ທີ່ເປັນການກີດຂວາງການຈະລາຈອນ ເຊັ່ນ ກອງໄມ້, ຫີນ, ຊາຍ, ດິນ, ເຫຼັກ ແລະ ວັດສະດຸກໍ່ສ້າງອື່ນ ໃສ່ໜ້າທາງ, ແຄມທາງ, ທາງຍ່າງ ຫຼື ຮ່ອງນໍ້າແຄມທາງ ຈະຖືກປັບໃໝ 300.000 ກີບ ພ້ອມທັງໃຫ້ຍົກຍ້າຍວັດສະດຸກໍ່ສ້າງດັ່ງກ່າວອອກ ພາຍໃນ ຊາວສີ່ຊົ່ວໂມງ ພາຍຫຼັງທີ່ໄດ້ເຮັດບົດບັນທຶກໃຫ້ຍົກຍ້າຍ. ຖ້າຫາກກາຍກໍານົດດັ່ງກ່າວ ຜູ້ລະເມີດ ຈະຖືກປັບໃໝເພີ່ມຊົ່ວໂມງລະ 15.000 ກີບ ຕໍ່ ໜຶ່ງ ແມັດກ້ອນ.

ໃນກໍລະນີເກີດອຸບປະຕິເຫດ ຍ້ອນວັດສະດຸກໍ່ສ້າງດັ່ງກ່າວ ເຈົ້າຂອງວັດສະດຸກໍ່ສ້າງນັ້ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທັງໝົດ.

### ມາດຕາ 34 ການປຸກສ້າງທີ່ລ່ວງລໍ້າເຂົ້າໃນພື້ນທີ່ເຂດການຈະລາຈອນ

ໃນກໍລະນີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ຫາກໄດ້ປຸກສ້າງອາຄານ, ຕູບ, ຕໍ່ເທີບ, ຕໍ່ເຕີຍ ຫຼື ອື່ນໆ ເຂົ້າໃນພື້ນທີ່ເຂດການຈະລາຈອນ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ຈະຖືກປັບໃໝ

450.000 ກີບ ພ້ອມທັງໃຫ້ຍ້າຍ ຫຼື ມ້າງອອກພາຍໃນ ຊາວສີ່ ຊົ່ວໂມງ ພາຍຫຼັງທີ່ໄດ້ເຮັດບົດບັນທຶກໃຫ້ຍົກຍ້າຍ. ຖ້າຫາກກາຍກຳນົດເວລາດັ່ງກ່າວ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຈະປັບໃໝເພີ່ມ ຊົ່ວໂມງລະ 15.000 ກີບ.

### ມາດຕາ 35 ການນຳໃຊ້ເຂດການຈະລາຈອນທີ່ບໍ່ໄດ້ຮັບອະນຸຍາດ

ໃນກໍລະນີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ຫາກຈອດລົ້, ຕັ້ງຮ້ານ, ກາງເຕັ້ນ ເພື່ອຈັດງານຕ່າງໆ, ວາງເຄື່ອງຂອງ ຫຼື ຂາຍສິນຄ້າທຸກປະເພດ ໃສ່ທາງຫຼວງ, ຖະໜົນ, ບ່າທາງ ຫຼື ທາງຄົນຍ່າງ ຈະຖືກປັບໃໝ 80.000 ກີບ.

ໃນກໍລະນີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ຫາກດຳເນີນກິດຈະການຂາຍລົດ, ສ້ອມແປງລົດ, ຕັ້ງ ຮ້ານອາຫານ, ຮ້ານບັນເທີງ ຫຼື ການບໍລິການອື່ນ ໂດຍການນຳໃຊ້ພື້ນທີ່ ຂອງທາງຫຼວງ, ບ່າທາງ ຫຼື ທາງຄົນຍ່າງເປັນບ່ອນວາງຂາຍ, ສ້ອມແປງລົດ, ຕັ້ງໂຕະອາຫານ ຫຼື ວາງສິນຄ້າ ຈະຖືກປັບໃໝ 300.000 ກີບ. ຖ້າຫາກມີການລະເມີດ ເຖິງ ສາມຄັ້ງ ຜູ້ລະເມີດ ຈະຖືກຖອນໃບອະນຸຍາດດຳເນີນທຸລະກິດ ແລະ ສັ່ງໃຫ້ປິດກິດຈະການບົນພື້ນຖານການປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

## ໝວດທີ 6
## ການປັບໃໝຜູ້ລະເມີດລະບຽບການກ່ຽວກັບການຂົນສົ່ງທາງບົກ

### ມາດຕາ 36 ການບັນທຸກສິນຄ້າ ຫຼື ເຄື່ອງຂອງເກີນຂະໜາດ

ຜູ້ຂັບຂີ່ລົດ ທີ່ບັນທຸກ ສິນຄ້າ ຫຼື ເຄື່ອງຂອງ ເກີນຂະໜາດ ຄວາມຍາວ, ຄວາມກວ້າງ ຫຼື ຄວາມສູງ ຈະຖືກປັບໃໝ ດັ່ງນີ້:

1. 50.000 ກີບ ສຳລັບລົດຈັກ;
2. 70.000 ກີບ ສຳລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;
3. 150.000 ກີບ ສຳລັບລົດ ເກງ, ກະບະ, ຈິບ ແລະ ຕູ້;
4. 120.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດນ້ອຍ, 250.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດກາງ, 300.000 ກີບ ສຳລັບລົດຂົນສົ່ງສິນຄ້າຂະໜາດໃຫຍ່.

ສຳລັບຜູ້ຂັບຂີ່ລົດຂົນສົ່ງພິເສດ ເປັນຕົ້ນ ລົດຂົນສົ່ງສິນຄ້າ ຫຼື ເຄື່ອງຂອງ ທີ່ມີຂະໜາດໃຫຍ່ ຊຶ່ງບໍ່ສາມາດແຍກເປັນຊິ້ນສ່ວນໄດ້ ຕ້ອງຂໍອະນຸຍາດນຳຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການທີ່ກ່ຽວຂ້ອງ. ໃນກໍລະນີຫາກມີການລະເມີດ ຜູ້ຂັບຂີ່ ຫຼື ເຈົ້າຂອງລົດ ຈະຖືກປັບໃໝ 500.000 ກີບ.

### ມາດຕາ 37 ການບັນທຸກສິນຄ້າ ຫຼື ເຄື່ອງຂອງ ນ້ຳໜັກເກີນ

ຜູ້ຂັບຂີ່ລົດບັນທຸກສິນຄ້າ ຫຼື ເຄື່ອງຂອງ ຕ້ອງປະຕິບັດຕາມລະບຽບການກ່ຽວກັບການບັນທຸກສິນຄ້າເຄື່ອງຂອງ ນ້ຳໜັກເກີນ. ໃນກໍລະນີ ມີການລະເມີດກ່ຽວກັບການບັນທຸກສິນຄ້າ ຫຼື ເຄື່ອງຂອງ ນ້ຳໜັກເກີນຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 38 ການບັນທຸກຜູ້ໂດຍສານ ເກີນຈຳນວນ

ໃນກໍລະນີ ຜູ້ຂັບຂີ່ລົດຂົນສົ່ງຜູ້ໂດຍສານ ຫາກບັນຈຸຜູ້ໂດຍສານເກີນຈຳນວນ ຈະຖືກປັບໃໝ ດັ່ງນີ້:

1. 15.000 ກີບ ຕໍ່ ຄົນ ສຳລັບລົດຖີບ, ລົດໂມເປດທີ່ຂີ່ເກີນ ສອງ ຄົນ;
2. 30.000 ກີບ ຕໍ່ ຄົນ ສຳລັບລົດຈັກ ທີ່ຂີ່ເກີນ ສອງ ຄົນ ບໍ່ລວມເດັກນ້ອຍອາຍຸບໍ່ເກີນ ສິບເອັດ ປີ;
3. 40.000 ກີບ ຕໍ່ ຄົນ ສຳລັບລົດສາມລໍ້ຕິດເຄື່ອງຈັກ ທີ່ຂີ່ເກີນ ຫ້າ ຄົນ, ລົດຕຸກໆ ທີ່ຂີ່ເກີນ ເກົ້າ ຄົນ;

4. 50.000 ກີບ ສໍາລັບລົດສາມລໍ້ຕິດເຄື່ອງຈັກ ທີ່ບັນທຸກສິນຄ້າ ຫຼື ເຄື່ອງຂອງ ເກີນ 300 ກິໂລກຣາມ, 90.000 ກີບ ສໍາລົດລັບຕຸກກຸງທີ່ບັນທຸກສິນຄ້າ ຫຼື ເຄື່ອງຂອງ ເກີນ 500 ກິໂລກຣາມ;

5. 50.000 ກີບ ຕໍ່ຄົນ ສໍາລັບລົດ ສີ່ລໍ້ທຸກປະເພດ ທີ່ບັນຈຸຜູ້ໂດຍສານເກີນຕັ່ງນັ່ງທີ່ປະກອບມາຈາກ ໂຮງງານຜະລິດ;

6. 50.000 ກີບ ຕໍ່ຄົນ ສໍາລັບລົດຂົນສົ່ງຜູ້ໂດຍສານສອງແຖວ ທີ່ບັນຈຸຜູ້ໂດຍສານເກີນ ສິບສີ່ ຄົນ ແລະ ເຄື່ອງຂອງບໍ່ເກີນ 500 ກິໂລກຣາມ. ໃນກໍລະນີທີ່ເອົາຜູ້ໂດຍສານຂຶ້ນເທິງຫຼັງຄາ ຫຼື ແຂວນທ້າຍລົດ ຜູ້ຂັບຂີ່ ຫຼື ເຈົ້າຂອງລົດທີ່ລະເມີດ ຈະຖືກປັບໃໝ ເພີ່ມອີກ 60.000 ກີບ ຕໍ່ຄົນ;

7. 50.000 ກີບ ຕໍ່ຄົນ ສໍາລັບຜູ້ທີ່ນັ່ງຂອບກະບະ;

8. 200.000 ກີບ ຕໍ່ ເທື່ອຄັ້ງ ສໍາລັບລົດຂົນສົ່ງຜູ້ໂດຍສານທີ່ແລ່ນລະຫວ່າງ ແຂວງ ຫາ ແຂວງ ຫຼື ລະຫວ່າງປະເທດ ທີ່ບັນທຸກເຄື່ອງຜູ້ໂດຍສານໃສ່ຫຼັງຄາລົດ.

### ມາດຕາ 39 ການຂັບຂີ່ລົດບໍ່ໃສ່ສາຍຮັດນິລະໄພ

ໃນກໍລະນີຜູ້ຂັບຂີ່ລົດ ບໍ່ໃສ່ສາຍຮັດນິລະໄພ ຈະຖືກປັບໃໝ ດັ່ງນີ້:

1. 70.000 ກີບ ສໍາລັບລົດ ເກງ, ກະບະ, ຈີບ ແລະ ຕູ້;

2. 100.000 ສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ, 150.000 ກີບ ສໍາລັບ ລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດກາງ, 200.000 ກີບສໍາລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່.

### ມາດຕາ 40 ການຄ່ຽນຖ່າຍສິນຄ້າ ຫຼື ເຄື່ອງຂອງ

ໃນກໍລະນີ ມີການຄ່ຽນຖ່າຍສິນຄ້າ ຫຼື ເຄື່ອງຂອງ ທີ່ກີດຂວາງການຈະລາຈອນ ຜູ້ຂັບຂີ່ລົດຂົນສົ່ງ ສິນຄ້າ ຫຼື ເຄື່ອງຂອງ ຈະຖືກປັບໃໝ 350.000 ກີບ ສໍາລັບລົດຂົນສົ່ງສິນຄ້າຢູ່ຕາມຖະໜົນ, ແຄມທາງຫຼວງ ແລະ ເຂດຊຸມຊົນ ທີ່ມີການຈະລາຈອນ ໜາແໜ້ນ ໂດຍສະເພາະ ແຕ່ເວລາ ເຈັດ ໂມງ ຫາ ເກົ້າ ໂມງ ແລະ ແຕ່ ສິບ ຫົກ ໂມງ ຫາ ສິບເຈັດ ໂມງ ສາມສິບ ນາທີ ສໍາລັບວັນລັດຖະການ.

ໃນກໍລະນີ ຫາກມີການລະເມີດເກີນ ສາມ ຄັ້ງ ຜູ້ຂັບຂີ່ລົດຂົນສົ່ງ ສິນຄ້າ ຫຼື ເຄື່ອງຂອງ ດັ່ງກ່າວ ຈະຖືກ ຖອນໃບຂັບຂີ່ຍານພາຫະນະ.

## ໝວດທີ 7
## ການປັບໃໝຜູ້ລະເມີດລະບຽບການກ່ຽວກັບການປົກປັກຮັກສາທາງຫຼວງ

### ມາດຕາ 41 ການເຄື່ອນຍ້າຍຍານພາຫະນະກົນຈັກໜັກ

ໃນກໍລະນີ ມີການເຄື່ອນຍ້າຍຍານພາຫະນະກົນຈັກໜັກ ທີ່ບໍ່ຖືກຕ້ອງ ຜູ້ຂັບຂີ່ລົດ ຈະຖືກປັບໃໝດັ່ງນີ້:

1. 200.000 ກີບ ສໍາລັບລົດໄຖນາຕີນເຫຼັກທຸກປະເພດ;

2. 350.000 ກີບ ສໍາລັບຍານພາຫະນະກົນຈັກຕີນເຫຼັກທຸກປະເພດ ທີ່ມີການເຄື່ອນຍ້າຍ ໂດຍບໍ່ໃຊ້ ລົດລາກແກ່ ຫຼື ຂົນສົ່ງ ຊຶ່ງເຮັດໃຫ້ທາງຫຼວງ, ຖະໜົນເປ່ເພເສຍຫາຍ.

ນອກຈາກຈະຖືກປັບໃໝ ຕາມທີ່ໄດ້ກໍານົດໄວ້ເທິງນີ້ແລ້ວ ຜູ້ຂັບຂີ່ລົດດັ່ງກ່າວ ຍັງຕ້ອງຮັບຜິດຊອບໃຊ້ ແທນຄ່າສ້ອມແປງຕອນທາງ ທີ່ເປ່ເພເສຍຫາຍ.

**ມາດຕາ 42 ການເຮັດໃຫ້ໂຄງສ້າງ, ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງຫຼວງ ເປ່ເພເສຍຫາຍ**

ໃນກໍລະນີບຸກຄົນໃດໜຶ່ງ ຫາກໄດ້ເຮັດໃຫ້ໂຄງສ້າງ, ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງຫຼວງ, ຖະໜົນ ເປ່ເພເສຍຫາຍ ຈະຖືກປັບໃໝ 300.000 ກີບ.

ນອກຈາກຈະຖືກປັບໃໝ ຕາມທີ່ໄດ້ກໍານົດໄວ້ເທິງນີ້ແລ້ວ ຜູ້ກໍ່ຄວາມເສຍຫາຍ ຍັງຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍດັ່ງກ່າວ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 43 ການສ້າງຄວາມເປິະເປື້ອນໃສ່ ທາງຫຼວງ**

ໃນກໍລະນີ ມີການສ້າງຄວາມເປິະເປື້ອນໃສ່ ທາງຫຼວງ ຈະຖືກປັບໃໝ ດັ່ງນີ້:

1. 150.000ກີບ ສໍາລັບຜູ້ຂັບຂີ່ລົດບັນທຸກ ຫີນ, ດິນ, ຊາຍ, ວັດສະດຸອື່ນ ທີ່ບໍ່ມີການປົກຫຸ້ມ ຫຼື ເຮັດໃຫ້ວັດສະດຸດັ່ງກ່າວ ຕົກເຮ່ຍໃສ່ທາງຫຼວງ ຫຼື ສ້າງຄວາມເປິະເປື້ອນໃນເວລາຂົນສົ່ງ ເຂົ້າ, ອອກ ຈາກສະຖານທີ່ກໍ່ສ້າງ;

2. 500.000 ກີບ ສໍາລັບຄົວເຮືອນ, ຫ້າງຮ້ານຕາມແຄມທາງຫຼວງ ທີ່ປ່ອຍນໍ້າເປື້ອນ, ຖອກເທນໍ້າໃສ່ໜ້າທາງ ເຮັດໃຫ້ທາງມື່ນ, ເປັນບວກ, ຂຸມ ແລະ ເຮັດໃຫ້ເກີດອຸບປະຕິເຫດ.

ຜູ້ທີ່ສ້າງຄວາມເປິະເປື້ອນໃສ່ທາງຫຼວງ, ຖະໜົນ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍໃນການອະນາໄມ ຫຼື ສ້ອມແປງທາງຫຼວງ, ຖະໜົນ. ໃນກໍລະນີເກີດອຸບປະຕິເຫດ ຈາກການລະເມີດດັ່ງກ່າວ ຜູ້ທີ່ລະເມີດ ຍັງຕ້ອງຮັບຜິດຊອບຄ່າເສຍຫາຍທີ່ເກີດຂຶ້ນທັງໝົດ.

**ມາດຕາ 44 ການລ້ຽງສັດ ຫຼື ການປ່ອຍສັດລ້ຽງ**

ໃນກໍລະນີ ມີການລ້ຽງສັດ ຫຼື ປ່ອຍສັດລ້ຽງຢູ່ຕາມທາງຫຼວງ ຊຶ່ງຈະພາໃຫ້ມີຄວາມສ່ຽງຕໍ່ການເກີດອຸບປະຕິເຫດ ເຈົ້າຂອງ ຫຼື ຜູ້ດູແລສັດ ຈະຖືກປັບໃໝ 30.000 ກີບ ຕໍ່ສັດສີ່ຕີນໜຶ່ງໂຕ ເປັນຕົ້ນ ແບ້, ມ້າ, ງົວ, ຄວາຍ.

ໃນກໍລະນີ ເກີດອຸບປະຕິເຫດຍ້ອນສັດລ້ຽງ ຊຶ່ງໄດ້ສ້າງຄວາມເສຍຫາຍ ຕໍ່ ໂຄງສ້າງ, ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງຫຼວງ ເຈົ້າຂອງ ຫຼື ຜູ້ດູແລສັດ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນທັງໝົດ ຕາມການປະເມີນມູນຄ່າເສຍຫາຍ ຂອງເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ.

ສໍາລັບກໍລະນີ ເກີດອຸບປະຕິເຫດຢູ່ທາງດ່ວນ ຍ້ອນສັດລ້ຽງ ໂດຍເຈົ້າຂອງທາງດ່ວນ ໄດ້ສ້າງຮົ້ວ ຫຼື ສິ່ງປ້ອງກັນສັດ ຢ່າງຖືກຕ້ອງຕາມມາດຕະຖານເຕັກນິກ ໃຫ້ເຈົ້າຂອງ ຫຼື ຜູ້ດູແລສັດລ້ຽງ ເປັນຜູ້ຮັບຜິດຊອບຄ່າເສຍຫາຍທັງໝົດ, ຖ້າຫາກເຈົ້າຂອງທາງດ່ວນ ສ້າງຮົ້ວ ຫຼື ສິ່ງປ້ອງກັນສັດ ບໍ່ໄດ້ຕາມມາດຕະຖານເຕັກນິກ ຫຼື ບໍ່ມີການຕິດຕາມກວດກາຢ່າງເປັນປົກກະຕິ ໃຫ້ເຈົ້າຂອງທາງດ່ວນ ເປັນຜູ້ຮັບຜິດຊອບຄ່າເສຍຫາຍທັງໝົດ. ສໍາລັບຜູ້ຂັບຂີ່ ທີ່ລະເມີດກົດຈະລາຈອນພາໃຫ້ເກີດອຸບປະຕິເຫດ ກໍມີສ່ວນຮັບຜິດຊອບຕໍ່ຄວາມເສຍຫາຍຕາມແຕ່ລະກໍລະນີ.

## ພາກທີ III

## ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການຈະລາຈອນທາງບົກ

**ມາດຕາ 45 ມາດຕະການຕໍ່ຄົນຍ່າງ**

ການຍ່າງຂ້າມທາງ ໃຫ້ຍ່າງຂ້າມຢູ່ບ່ອນທາງມ້າລາຍ, ທາງລອດ ຫຼື ຂົວຂ້າມທາງ. ໃນກໍລະນີທີ່ບໍ່ມີທາງມ້າລາຍ, ບໍ່ມີທາງລອດ ຫຼື ຂົວຂ້າມທາງ ໃຫ້ຍ່າງຂ້າມ ໃກ້ທາງຄົບ, ທາງແຍກ ຫຼື ບ່ອນທີ່ສາມາດແນມເຫັນການຈະລາຈອນຈາກທຸກທິດທາງໄດ້ ແລະ ມີຄວາມປອດໄພ.

ການຍ່າງຕາມທາງ ໃຫ້ຍ່າງໄປຕາມບ່າທາງ ຫຼື ຂອບເຂດທີ່ກໍານົດໄວ້ສໍາລັບຄົນຍ່າງ. ໃນກໍລະນີທີ່ບໍ່ມີບ່າທາງ ຫຼື ຂອບເຂດ ສະເພາະສໍາລັບຄົນຍ່າງ ໃຫ້ຍ່າງໄປຕາມແຄມທາງກໍ້າຊ້າຍມືຂອງຕົນ, ສໍາລັບການຍ່າງນໍາກັນ

ຫຼາຍຄົນ ໃຫ້ຍ່າງເປັນແຖວດຽວຕາມຫຼັງກັນ ແລະ ບໍ່ໃຫ້ເກີນ ໜຶ່ງ ແມັດ ຫ່າງຈາກຂອບທາງກ້ຳຊ້າຍມືຂອງຕົນ.

ໃນກໍລະນີ ບໍ່ປະຕິບັດຕາມທີ່ໄດ້ກຳນົດໄວ້ເທິງນີ້ ຄົນຍ່າງຂ້າມທາງ ແລະ ຄົນຍ່າງຕາມທາງ ທີ່ບໍ່ຖືກຕ້ອງນັ້ນ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 46 ມາດຕະການຕໍ່ຜູ້ລະເມີດລະບຽບການກ່ຽວກັບການຈະລາຈອນທາງບົກ ທີ່ພາໃຫ້ເກີດອຸບປະຕິເຫດ**

ບຸກຄົນໃດ ຫາກລະເມີດລະບຽບການຈະລາຈອນທາງບົກ, ກົດໝາຍວ່າດ້ວຍ ການຂົນສົ່ງທາງບົກ, ກົດໝາຍວ່າດ້ວຍ ທາງຫຼວງ, ກົດໝາຍວ່າດ້ວຍ ການຈະລາຈອນທາງບົກ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງກັບຄວາມປອດໄພຕາມທາງຫຼວງ ທີ່ພາໃຫ້ເກີດອຸບປະຕິເຫດ ຈະຖືກປັບໃໝໃນອັດຕາຕາມກໍລະນີທີ່ໄດ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ພ້ອມທັງຖືກດຳເນີນຄະດີຕາມປະມວນກົດໝາຍອາຍາ.

ໃນກໍລະນີເກີດອຸບປະຕິເຫດແລ້ວ ຜູ້ຂັບຂີ່ລົດ ຫາກຫຼົບໜີ ກໍຈະຖືກປັບໃໝ ແລະ ດຳເນີນຄະດີຕາມປະມວນກົດໝາຍອາຍາ.

**ມາດຕາ 47 ມາດຕະການຕໍ່ຜູ້ລະເມີດໃນສະຖານດຽວກັນຫຼາຍຄັ້ງ**

ຜູ້ຂັບຂີ່ລົດທຸກປະເພດ ທີ່ລະເມີດລະບຽບການກ່ຽວກັບການຈະລາຈອນທາງບົກ ໃນສະຖານດຽວກັນຫຼາຍຄັ້ງ ຈະຖືກປັບໃໝ ແລະ ມາດຕະການອື່ນ ດັ່ງນີ້:

1. ການລະເມີດຄັ້ງທີ ສອງ ຈະຖືກປັບໃໝ ສອງ ເທົ່າ ຂອງອັດຕາປັບໃໝ ພ້ອມທັງກັກໃບຂັບຂີ່ຍານພາຫະນະ ໄວ້ຊົ່ວຄາວ ສາມ ເດືອນ;

2. ການລະເມີດເປັນຄັ້ງທີ ສາມ ຈະຖືກປັບໃໝ ສາມ ເທົ່າ ຂອງອັດຕາປັບໃໝ ແລະ ຖອນໃບຂັບຂີ່ຍານພາຫະນະ ພ້ອມທັງບໍ່ອະນຸຍາດໃຫ້ຜູ້ກ່ຽວຂັບຂີ່ລົດ ໜຶ່ງ ປີ, ຈາກນັ້ນຈຶ່ງອະນຸຍາດໃຫ້ສອບເສັງເອົາໃບຂັບຂີ່ຍານພາຫະນະຄືນໃໝ່.

ໃນໄລຍະທີ່ຜູ້ຂັບຂີ່ລົດ ຍັງຖືກກັກ ຫຼື ຖອນ ໃບຂັບຂີ່ຍານພາຫະນະທາງບົກ ຫ້າມຜູ້ຂັບຂີ່ເຮັດໃບແຈ້ງເສຍຫາຍ ເພື່ອອອກ ຫຼື ສອບເສັງ ໃບຂັບຂີ່ຍານພາຫະນະທາງບົກໃໝ່ ຢ່າງເດັດຂາດ. ໃນກໍລະນີຫາກກວດພົບເຫັນການກະທຳດັ່ງກ່າວ ຜູ້ກ່ຽວ ຈະຖືກດຳເນີນຄະດີ ຕາມກົດໝາຍທີ່ກ່ຽວຂ້ອງ.

## ພາກທີ IV

## ການຄຸ້ມຄອງ ລົດທີ່ຖືກກັກໄວ້, ການຊຳລະ, ການນຳໃຊ້ ເງິນປັບໃໝ ແລະ ເງິນຄ່າປົກປັກຮັກສາຍານພາຫະນະ

**ມາດຕາ 48 ການຄຸ້ມຄອງລົດທີ່ຖືກກັກໄວ້**

ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ມີສິດກັກລົດທຸກປະເພດໄວ້ ໃນກໍລະນີ ດັ່ງນີ້:

1. ເກີດອຸບປະຕິເຫດຮ້າຍແຮງ ແລະ ຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້;
2. ບໍ່ມີໃບທະບຽນຍານພາຫະນະ ຫຼື ມີການປອມແປງເອກະສານທີ່ກ່ຽວຂ້ອງ.

ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ຕ້ອງຮັກສາ ແລະ ເກັບມ້ຽນ ລົດທີ່ໄດ້ກັກໄວ້ນັ້ນ ໄວ້ໃນສາງເປັນຢ່າງດີ ແລະ ເຈົ້າຂອງລົດທີ່ຖືກກັກດັ່ງກ່າວ ຕ້ອງຮັບຜິດຊອບຄ່າປົກປັກຮັກສາລົດ ໂດຍຄິດໄລ່ເປັນລາຍວັນ ຕາມແຕ່ລະປະເພດຂອງລົດ ຈົນກວ່າຈະແກ້ໄຂຄະດີສຳເລັດ ດັ່ງນີ້:

1. 3.000 ກີບ ຕໍ່ ວັນ ສຳລັບລົດຖີບ, ລົດໂມເປດ;
2. 4.000 ກີບ ຕໍ່ ວັນ ສຳລັບລົດຈັກ;
3. 6.000 ກີບ ຕໍ່ ວັນ ສຳລັບລົດສາມລໍ້ຕິດເຄື່ອງຈັກ, ລົດໄຖນາທຸກປະເພດ;
4. 9.000 ກີບ ຕໍ່ ວັນ ສຳລັບສຳລັບລົດ ເກງ, ກະບະ, ຈິບ ແລະ ຕູ້;

5. 15.000 ກີບ ຕໍ່ ວັນ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດນ້ອຍ ແລະ ກາງ;

6. 20.000 ກີບ ຕໍ່ ວັນ ສຳລັບລົດຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ຂະໜາດໃຫຍ່ ແລະ ລົດກົນຈັກໜັກ.

ໃນໄລຍະທີ່ເກັບຮັກສາລົດໄວ້ໃນສາງນັ້ນ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຕ້ອງປົກປັກຮັກສາລົດທີ່ຖືກກັກໄວ້ໃຫ້ດີ ແລະ ບໍ່ອະນຸຍາດໃຫ້ນຳໃຊ້ລົດດັ່ງກ່າວ. ໃນກໍລະນີເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຫາກລະເມີດ ຈະຖືກລົງວິໄນ ແລະ ໃຫ້ຮັບຜິດຊອບຄ່າເສຍຫາຍທີ່ເກີດຂຶ້ນ.

ໃນກໍລະນີ ຫາກການດຳເນີນຄະດີບໍ່ສຳເລັດ ພາຍໃນ ສາມສິບວັນ ຄ່າປົກປັກຮັກສາລົດ ຈະຫຼຸດລົງ ເຈັດສິບ ສ່ວນຮ້ອຍ.

**ມາດຕາ 49 ການຊຳລະເງິນຄ່າປັບໃໝ ແລະ ຄ່າປົກປັກຮັກສາຍານພາຫະນະ**

ຜູ້ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການຈະລາຈອນທາງບົກ ຕ້ອງຊຳລະເງິນຄ່າປັບໃໝ ຕາມບົດບັນທຶກການລະເມີດ ແລະ ຄ່າປົກປັກຮັກສາຍານພາຫະນະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງດຳລັດສະບັບນີ້ ໂດຍການຊຳລະຜ່ານລະບົບທະນາຄານ, ໄປສະນີ, ຈຸດບໍລິການທີ່ລັດໄດ້ກຳນົດ.

**ມາດຕາ 50 ການຄຸ້ມຄອງ ແລະ ນຳໃຊ້ ເງິນທີ່ໄດ້ຈາກການປັບໃໝ ແລະ ເງິນຄ່າປົກປັກຮັກສາຍານພາຫະນະ**

ເງິນທີ່ໄດ້ຈາກການປັບໃໝ ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ຕ້ອງມອບເຂົ້າກອງທຶນທາງ. ສຳລັບການນຳໃຊ້ເງິນດັ່ງກ່າວ ໃຫ້ນຳໃຊ້ເຂົ້າໃນວຽກງານຕາມທີ່ໄດ້ກຳນົດໄວ້ໃນລະບຽບການກ່ຽວກັບກອງທຶນທາງ.

ສຳລັບການຄຸ້ມຄອງ ແລະ ນຳໃຊ້ ເງິນຄ່າປົກປັກຮັກສາຍານພາຫະນະ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບງົບປະມານແຫ່ງລັດ ຢ່າງເຂັ້ມງວດ.

## ພາກທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 51 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 52 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍການປັບໃໝ ແລະ ມາດຕະການຕ່າງໆ ຕໍ່ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບການຈະລາຈອນທາງບົກ, ການຂົນສົ່ງທາງບົກ ແລະ ການປົກປັກຮັກສາທາງຫຼວງ ສະບັບເລກທີ 188/ນຍ, ລົງວັນທີ 03.07.2007.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ



ພັນຄຳ ວິພາວັນ